# ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 19 ພຶສພາ 2024 (05-19-2024)

---

**ດຳເນີນຊີວິດຮ່ວມກັນໃນພຣະຄຣິດ**

**ຈຸດສຳຄັນໃນບົດຮຽນ:** ຜູ້ເຊື່ອແບ່ງປັນແລະສັມພັດຊີວິດໃນພຣະຄຣິດຮ່ວມກັນ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ຕົວລະຄອນຈາກ The Jungle Book ໄດ້ແກ່ ເມົາຄລີ, ບາກີຣາ, ບາລູ, ຄາ, ແລະ ຄິງ ຫລູຍ ໃຫ້ຄວາມບັນເທີງແກ່ເຮົາມານານແລ້ວ. ເມົາຄລີ, ເດັກຊາຍທີ່ຖືກລ້ຽງດູໂດຍໝາປ່າໃນປ່າອິນເດັຍ, ສ້າງຄວາມສຸກໃຫ້ແກ່ເດັກນ້ອຍແລະຜູ້ໃຫຍ່ດ້ວຍການຜະຈົນພັຍໃນປ່າອັນແສນສນຸກແລະເພື່ອນຝູງສັດ. ແຕ່ເລື້ອງຂອງ ດີນາ ຊານິຊາຣ໌ ຜູ້ເປັນແຮງບັນດານໃຈໃຫ້ປຶ້ມເຫຼັ້ມນີ້ຍັງຫ່າງໄກຈາກຄວາມສວຍງົດງາມຢູ່.

ເມື່ອເປັນເດັກໜຸ່ມ, ໃຊ້ຊີວິດຢູ່ທ່າມກາງຝູງໝາປ່າໃນປ່າອິນເດັຍ, ຊຶ່ງຂາດການຕິດຕໍ່ພົວພັນກັບມນຸດ. ໃນ1867 ພວກນາຍພານໄດ້ພົບດີນາ ອາຍຸຫົກປີ ແລະໄດ້ເອົາລາວໄປໃຫ້ອົງການສົງເຄາະລ້ຽງເດັກກຳພ້າ ສີຄານດຣາ. ເລີ່ມແລກ, ດີນາ ກໍຍັງຫອນຄືໝາເລື້ອຍມາ ແລະຍ່າງສີ່ຂາ. ລາວກິນແຕ່ຊີ້ນດິບ ແລະແທ້ນກະດູກເທົ່ານັ້ນ. ດີນາບໍ່ເຄີຍເວົ້າພາສາຄົນແລະບໍ່ໄດ້ປັບຕົວເຂົ້າກັບຊີວິດທ່າມກາງມນຸດ. ລາວເສັຍຊີວິດເມື່ອອາຍຸ 35ປີ !

ຜູ້ຊ່ຽວຊານກ່າວວ່າຄວາມສັມພັນມນຸດເປັນສຳລັບຄວາມເປັນຢູ່ທີ່ດີທັງກາຍແລະໃຈຂອງເຮົາ. ຄວາມເຫງົາແລະຄວາມໂດດດ່ຽວສົ່ງຜົນໃຫ້ນອນບໍ່ຫຼັບ, ພູມຕ້ານທານອ່ອນແອ, ຄວາມວິຕົກກັງວົນ, ຄວາມຊຶມເສົ້າ, ໂລກຫົວໃຈ, ອຳມະພາດ, ແລະພາວະສມອງເສື່ອມ. ພວກເຮົາຕ້ອງການຄົນອື່ນ. ບໍ່ມີທີ່ໃດຈະຈິງໄປກວ່າຊີວິດຄຣິສຕຽນ. ການຕິດຕາມພຣະເຢຊູເປັນການຍາກ. ເຮົາບໍ່ໄດ້ຕັ້ງໃຈຕິດຕາມຢ່າງໂດດດ່ຽວ. ຜູ້ເຊື່ອຖືກກຳນົດໃຫ້ໃຊ້ຊີວິດຮ່ວມກັນ.

***ມີພາພຍົນຫຼືລາຍການທີວີພ້າຈົດຈຳເລື້ອງໃດແດ່ທີ່ສະແດງໃຫ້ເຫັນການໃຊ້ຊີວິດຮ່ວມກັນຂອງຄົນເຮົາ?***

**ພຣະຄັມພີກ່າວວ່າແນວໃດ :** 1ເທສະໂລນີກ 5:4-15 ( ເບິ່ງ ຕາມຂໍ້ 1, 2 ແລະ 3 )

**ການສຶກສາພຣະຄັມພີ**

**1. <u>1ເທສະໂລນີກ 5:4-8</u>.**

*4. ແຕ່ວ່າພີ່ນ້ອງເອີຍ, ພວກເຈົ້າກໍບໍ່ໄດ້ຢູ່ໃນຄວາມມືດແລ້ວ ເໝືອນວັນນັ້ນຈະມາໂດດໃສ່ເຈົ້າເໝືອນດັ່ງຂະໂມຍມາ 5. ເຫດ*
*ວ່າເຈົ້າທັງປວງເປັນຝ່າຍຄວາມສະຫວ່າງ ແລະຝ່າຍກາງເວັນ ພວກເຮົາບໍ່ເປັນຝ່າຍກາງຄືນຫຼືຝ່າຍຄວາມມືດ **6.** ສັນນັ້ນແຫຼະ,*
*ຢ່າໃຫ້ເຮົາທັງຫຼາຍຫຼັບຢູ່ເໝືອນດັ່ງຄົນອື່ນ ແຕ່ໃຫ້ເຮົາເຝົ້າລະວັງແລະຢ່າເມົາມົວ 7. ເພາະວ່າຄົນທີ່ນອນຫຼັບກໍນອນຫຼັບໃນ*
*ກາງຄືນ ແລະຄົນເມົາເຫຼົ້າກໍເມົາໃນກາງຄືນ 8. ແຕ່ສ່ວນພວກເຮົາຜູ້ເປັນຝ່າຍກາງເວັນຢ່າໃຫ້ເຮົາເມົາມົວຢູ່ ຈົ່ງສຸບເອົາຄວາມ*
*ເຊື່ອ ແລະຄວາມຮັກເປັນເຄື່ອງປ້ອງກັນໜ້າເອິກໄວ້ ແລະເອົາຄວາມໄວ້ໃຈວ່າຈະໄດ້ພົ້ນເປັນເຄື່ອງຄຸມປ້ອງຫົວໄວ້.*

ມັນເປັນຄວາມຈິງ, ໃນສາຫະຣັດອາເມຣິກາ ບໍ່ມີທາງທຽບໄດ້ກັບສິ່ງທີ່ພີ່ນ້ອງຂອງເຮົາໃນພຣະຄຣິດທົນທຸກຍ້ອນຄວາມເຊື່ອຂອງພວກເຂົາໃນພາກສ່ວນອື່ນຂອງໂລກ. ແຕ່ຜູ້ທີ່ດຳເນີນຊີວິດຕາມຄວາມເຊື່ອຢ່າງແຂງແຮງແລະຍືນຢັດຕໍ່ມູມມອງຕາມພຣະຄັມພີພົບວ່າຕົວເອງຖືກກີດກັນຫຼາຍຂຶ້ນ. ໃນສັງຄົມຄົນບໍ່ເຊື່ອ, ຄຣິສຕຽນເປັນຄົນນອກ, ແມ້ກະທັ້ງທີ່ນີ້ໃນຊາດທີ່ຢູ່ບົນພື້ນຖານອິສຣະພາບທາງສາສນາ. ຖ້າສິ່ງນີ້ເປັນສັນຍານ, ມັນຄວນຈະເຮັດເຮົາປະຫຼາດໃຈ. ພຣະຄັມພີບອກຜູ້ຕິດຕາມພຣະຄຣິດ ພວກເຮົາຄາດວ່າຈະຖືກປະຕິເສດຈາກໂລກດັ່ງດຽວກັນກັບພຣະເຢຊູຖືກມາ.

ທ່ານໂປໂລເຫັນພາບຂອງໂລກແບບນີ້, ຖືກແບ່ງແຍກຈາກຜູ້ທີ່ຢູ່ໃນພຣະຄຣິດແລະຜູ້ທີ່ບໍ່ມີພຣະອົງ. ມຸມມອງນີ້ສນັບສນູນຂ່າວສານຂອງພຣະອົງ ໃນ 1ທສນ 5:4-8. ສຳລັບບົດນີ້, ທ່ານໂປໂລໄດ້ຂຽນໄປເຖິງຄຣິສຕະຈັກເທສະໂລນິກ ເພື່ອສັ່ງສອນຄົນເຊື່ອໜຸ່ມແລຕອບຄຳຖາມຂອງເຂົາ. ເທສະໂລນິກເປັນເມືອງທຳອິດທີ່ທ່ານໂປໂລ ແລະຊີລາ ເທສນາສັ່ງສອນໃນທວີບຢູໂຣບ.

ບໍ່ນານຫຼັງຈາກກໍ່ຕັ້ງຄຣິສຕະຈັກທີ່ນັ້ນ, ທ່ານໂປໂລໄດ້ສົ່ງຕີໂມທຽວກັບໄປກວດເບິ່ງຜູ້ເຊື່ອໃໝ່. ຕີໂມທຽວລາຍງານຄືນໃຫ້ທ່ານໂລ. ນຳເອົາຄຳຖາມຂອງຊາວເທສະໂລນິກກ່ຽວກັບຄວາມເຊື່ອໄປລາຍງານ.1ເທສະໂລນິກແມ່ນຈົດໝາຍຄຳຕອບຂອງທ່ານໂປໂລທ່າມກາງສິ່ງອື່ນໆ, ເພິ່ນຕອບຫຼາຍຄຳຖາມກ່ຽວກັບການສະເດັດກັບມາຂອງພຣະຄຣິດ. ແລະ ມັນແມ່ນການສະເດັດກັບມາຂອງພຣະຄຣິດ ທ່ານໂປໂລໄດ້ອະທິບາຍໃນຂໍ້ນຳຂອງບົດ. ທ່ານໂປໂລກ່າວວ່າບໍ່ມີໃຜຮູ້ວ່າຈະເກີດຂຶ້ນຍາມໃດ, ແລະສຳລັບຜູ້ທີ່ປະຕິເສດພຣະເຢຊູ, ການກັບມາຂອງພຣະອົງຈະມາຢ່າງປະຫຼາດໃຈແບບບໍ່ເພິ່ງປະສົງ.

ໂດຍທາງກົງກັນຂ້າມ, ໃນ ຂໍ້ 4, ທ່ານໂປໂລແຍກແຍະຜູ້ເຊື່ອ ເພິ່ນກ່າວວ່າ ເໝືອນດັ່ງບຸດຝ່າຍຄວາມສວ່າງແລະຝ່າຍກາງເວັນ, "ບໍ່ເປັນຝ່າຍກາງຄືນ." ກາງຄືນແລະຄວາມມືດອ້າງເຖິງຄວາມຊົ່ວຊ້າແລະການບໍ່ຫິວຊາຄວາມຈິງ. ຄວາມສວ່າງເປັນສັນຍາລັກສິ່ງດີແລະບໍຣິສຸດ, ຈິງແລະບໍ່ຣິສຸດ. ມີຄວາມແຕກຕ່າງຢ່າງສິ້ນເຊີງຣະຫວ່າງຜູ້ທີ່ຢູ່ໃນຄວາມສວ່າງແລະຜູ້ທີ່ຢູ່ໃນຄວາມມືດ. ຜູ້ທີ່ຢູ່ໃນຄວາມມືດຈະເຫັນການສະເດັດກັບມາຂອງພຣະເຢຊູຢ່າງຊັດເຈນໃນຂນະທີ່ຄົນນອນຫຼັບຫຼືເມົາເຫຼົ້າ ຈະແນມເຫັນສິ່ງທີ່ເກີດຂຶ້ນອ້ອມຮອບພວກເຂົາ.

ການນອນຫຼັບໃນທີ່ນີ້ເປັນສັນຍາລັກຂອງຄວາມບໍ່ຫິວຊາຫຼືຄວາມກຽດຄ້ານ. ເປັນຄຳບັລຍາຍເຖິງຜູ້ທີ່ດຳລົງຊີວິດເພື່ອຄວາມສນຸກສນານຊົ່ວຄາວບໍ່ສົນໃຈນຳພຣະເຈົ້າ. ຢ່າເປັນເໝືອນຄົນທີ່ຢູ່ໃນຄວາມມືດ, ທ່ານໂປໂລໄດ້ເຕືອນຜູ້ເຊື່ອ. ຜູ້ຕິດຕາມພຣະຄຣິດຕ້ອງການສັນຍານເຕືອນພັຍແລະຕຽມພ້ອມສຳລັບການສະເດັດກັບມາຂອງພຣະອົງ. ນັ້ນລວມເຖິງການດຳລົງຊີວິດຕາມລຳດັບຄວາມສຳຄັນຂອງຣາຊອານາຈັກ ແລະການດຳເນີນຊີວິດຕາມຄຳສັ່ງຂອງພຣະເຢຊູ. ມັນໝາຍເຖິງການເຂົ້າຮ່ວມສົງຄາມຝ່າຍວິນຍານ.

ເພາະວ່າພວກເຮົາເປັນບຸດຝ່າຍຄວາມສວ່າງ ດຳລົງຊີວິດຢູ່ໃນໂລກທີ່ມືດມົນ ແລະຕໍ່ສູ້ສົງຄາມຝ່າຍວິນຍານ, ຄຣິສຕຽນຕ້ອງການຊຶ່ງກັນແລະກັນ. ຜູ້ເຊື່ອຊູກຳລັງຊຶ່ງກັນແລະກັນ ເພື່ອຢືນຢັດຢູ່ ແລະເຝົ້າລະວັງຢູ່. ຮ່ວມກັນເຮົາບໍ່ຢູ່ໂດດດ່ຽວໃນໂລກທີ່ເຮົາຖືກຂັບໄລ່.

## 2. 1ເທສະໂລນິກ 5:9-11.

*9. ເຫດວ່າພຣະເຈົ້າບໍ່ໄດ້ຊົງຕັ້ງແຕ່ງເຮົາທັງຫຼາຍໄວ້ສຳລັບພຣະພິໂລດ ແຕ່ວ່າ ເພື່ອຈະໄດ້ຮັບຄວາມພົ້ນດ້ວຍທາງພຣະເຢຊູຄຣິດ*
*ເຈົ້າຂອງພວກເຮົາ 10. ຜູ້ໄດ້ຊົງສລະພຣະຊົນເພື່ອພວກເຮົາທັງຫຼາຍ ເພື່ອວ່າເຖິງແມ່ນເຮົາຈະຕື່ນຫຼືຫຼັບຢູ່ກໍດີ ເຮົາທັງຫຼາຍຈະໄດ້*
*ມີຊີວິດດ້ວຍກັນກັບພຣະອົງ 11. ດ້ວຍເຫດນັ້ນຈົ່ງເລົ້າໂລມອອຍໃຈກັນແລະກັນ* ✝ *ແລະຈົ່ງຊ່ວຍກັນໃຫ້ມີຄວາມຈະເລີນຂຶ້ນຕາມ*
*ດັ່ງເຈົ້າທັງຫຼາຍເຮັດຢູ່ນັ້ນ.*

Lt. Ralph Galati ເປັນນັກເດີນເຄື່ອງບິນຂອງກອງທັບອາກາດສາຫະຣັດໃນເມື່ອຍົນລົບ F-4 Phantom jet ຂອງເພິ່ນ ຖືກຍິງຕົກຢູ່ວຽດນາມເໜືອ ໃນເດືອນ ກຸມພາ, 16, 1972. ໂດດຈ້ອງລົງກາງບ້ານຂອງສັດຕຣູ, ເພິ່ນ ແລະນັກບິນ ຖືກຈັບເປັນສະເລີຍແລະຖືກສົ່ງໄປຮາໂນຍ. ທີ່ນັ້ນ, ເພິ່ນຕ້ອງທົນທຸກທໍຣະມານເປັນເວລາສິບສີ່ເດືອນຖານະຊະເລີຍເສິກໂດຍຕ້ອງທົນທຸກທໍຣະມານຈາກການສືບສວນ, ການນອນ ແລະການອົດອາຫານ. ເພິ່ນໄດ້ໃຊ້ເຈັດສິບຫ້າວັນຢູ່ໃນຫ້ອງຂັງດ່ຽວ. ວຽດນາມເໜືອໄດ້ລົງໂທດນັກໂທດແບບນີ້ ພຍາຍາມທຳລາຍພວກເຂົາ ເພື່ອຈະທຳຂ່າວກອງຫຼືໃຊ້ນັກໂທດເປັນເຄື່ອງໂຄສະນາຊວນເຊື່ອ.

ສະຖານການເຊັ່ນນັ້ນ, ອາດທຳໃຫ້ຫຼາຍຄົນສິ້ນຫວັງແລະໝົດອາໄລຕາຍຢາກ. ແຕ່ຜູ້ທີ່ລອດຕາຍມາໄດ້ກໍໄດ້ໃຫ້ບົດຮຽນແກ່ເຮົາທຸກຄົນ. ນຶ່ງໃນບົດຮຽນເຫຼົ່ານັ້ນ: ຖິ້ມການສື່ສານຕລອດຊີວິດ. ຕໍ່ຕ້ານຄວາມສ່ຽງອັນຍິ່ງໃຫຍ່, ທ່ານ ຣາຟ໌ ແລະ ເພື່ອນຮ່ວມຄຸກດຽວກັນໄດ້ອອກໄປພົວພັນກັນ. ເຂົາໄດ້ຄິດຄົ້ນເທັກນິກການຕິດຕໍ່ພົວພັນລັບ ແລະກົດລັບ ເພື່ອຕິດຕໍ່ກັນເປັນປະຈຳ. ໃນເວລາທ່ານ ຣາຟ໌ຢູ່ໃນຫ້ອງຂັງດ່ຽວເປັນເວລາຫຼາຍອາທິດ, ນັກໂທດຄົນນຶ່ງໄດ້ກ້າສ່ຽງພັຍ-ສົ່ງຂ່າວຫາທ່ານຣາຟ໌, ເພື່ອບອກວ່າເພິ່ນບໍ່ໄດ້ຢູ່ຄົນດຽວ. ຜົນກະທົບຂອງ

ຣາຟ໌ເລີກຊຶ້ງຫຼາຍ. "ລາວບໍ່ໄດ້ໂດດດ່ຽວ. ເພິ່ນຮັບຮູ້ວ່າເພິ່ນມີລະບົບສນັບສນູນ, ແມ່ນໃນສະຖານການທີ່ຫົດຫູ່ໃຈ." ຖ້າເຮົາບໍ່ຄິດພຽງແຕ່ຢູ່ລອດ, ແຕ່ຈະເລີນຂຶ້ນໃນການຢູ່ເພື່ອພຣະຄຣິດໃນໂລກນີ້, ຜູ້ເຊື່ອຄວນຮູ້ວ່າເຮົາບໍ່ໄດ້ຕໍ່ສູ້ຄົນດຽວ. ພວກເຮົາຕ້ອງຕິດຕໍ່ພົວພັນກັນ. ນັ້ນຄືຈຸດສຳຄັນຂອງທ່ານໂປໂລໃນຂໍ້ 9-11.

ທ່ານມີຄຳຖາມຫຼືຂໍ້ຂ້ອງໃຈໃດໆບໍ່ທີ່ຜູ້ອ່ານຂອງເພິ່ນເວົ້າກ່ຽວຂ້ອງກັບເວລາສຸດທ້າຍແລະການພິພາກສາທີ່ຈະມີມາຫຼືບໍ່? ທ່ານໂປໂລໄດ້ຮັບປະກັນວ່າບໍ່ມີສິ່ງໃດຕ້ອງຢ້ານ. ຫາກໍ່ກ່າວເຖິງຄວາມຫວັງແຫ່ງຄວາມພົ້ນຂອງຜູ້ເຊື່ອ (ຂໍ້ 8), ເພິ່ນໄດ້ອະທິບາຍນີ້ໝາຍຄວາມວ່າຢ່າງໃດໃນຂໍ້ 9. ການກ່າວເຖິງຄວາມຫວັງແຫ່ງຄວາມພົ້ນຂອງຜູ້ເຊື່ອນັ້ນ "ບໍ່ແມ່ນເລື້ອງງ່າຍທີ່ເຮົາຈະໄປເຖິງສວັນ" ແບບມີຄວາມຫວັງເຊັ່ນນັ້ນ. ຄວາມຫວັງແຫ່ງຄວາມພົ້ນຂອງເຮົາແມ່ນຄວາມໝັ້ນໃຈໃນການຮັບປະກັນວ່າສິ່ງດີທີ່ສຸດຍັງມາບໍ່ເຖິງ.

ການພິພາກສາກຳລັງຈະມາ (ພນມ 6:16-17). ແຕ່ແຜນການຂອງພຣະເຈົ້າສຳລັບລູກຂອງພຣະອົງບໍ່ແມ່ນການລົງໂທດ. ແຜນການຂອງພຣະອົງສຳລັບຜູ້ທີ່ວາງໃຈໃນພຣະເຢຊູເພື່ອການອະພັຍບາບຂອງເຂົາແມ່ນຄວາມພົ້ນ. ຍ້ອນວ່າພຣະເຢຊູໄດ້ສິ້ນພຣະຊົນເພື່ອຊົດໃຊ້ຄວາມຜິດບາບຂອງເຮົາ, ອານາຄົດຂອງເຮົາຈະຮຸ່ງເຮືອງສົດໃສ. ອານາຄົດບໍ່ມີເຫດຜົນທີ່ຈະຕ້ອງຢ້ານ.ບໍ່ວ່າພວກເຮົາຈະ "ຕື່ນ ຫຼື ຫຼັບ," ພວກເຮົາສາມາດຮູ້ໄດ້ວ່າ ພວກເຮົາຈະຢູ່ກັບພຣະເຈົ້າຕລອດໄປໃນສວັນ. ຄຳວ່າ "ຕື່ນ ແລະ "ຫຼັບ" ອາດໝາຍເຖິງຄົນທີ່ມີຊີວິດຢູ່ແລະຄົນທີ່ຕາຍແລ້ວ. "ຕື່ນ"ແລະ "ຫຼັບ" ຖືກໃຊ້ລັກສນະນີ້ບ່ອນອື່ນໃນພຣະຄັມພີໃໝ່ (ມທ 9:24; 1ທສນ 4:13-18). ປານນັ້ນ ກໍມີແນວໂນ້ມວ່າ ໂປໂລຈະໃຊ້ສິ່ງເຫຼົ່ານີ້ໃນຄວາມໝາຍດຽວກັນກັບໃນຂໍ້ 6, ໂດຍທີ່ການນອນຫຼັບເປັນສັນຍາລັກຂອງຄວາມບໍ່ຫົວຊານຳສິນທັມ. ຖ້າເປັນເຊັ່ນນັ້ນ ຄວາມໝາຍຂອງເພິ່ນຄືວ່າອານາຄົດຂອງຜູ້ເຊື່ອໃນພຣະຄຣິດນັ້ນຖືກຮັບປະກັນແລ້ວ, ແນ່ນອນ ບໍ່ວ່າເຮົາຈະມີຊີວິດຢູ່ຫຼືບໍ່ກໍຕາມ ເຮົາກໍຄາດຫວັງວ່າພຣະອົງຈະສະເດັດກັບມາ.

"ດັ່ງນັ້ນ" ທ່ານໂປໂລຈຶ່ງເຂົ້າໃຈຈຸດສຳຄັນໃນຂໍ້ 11. ໃນເມື່ອເຮົາຮູ້ຈັກອານາຄົດຂອງເຮົາປອດພັຍດີ, ພວກເຮົາຕ້ອງໃຫ້ກຳລັງໃຈກັນແລະກັນດ້ວຍຄວາມຫວັງຮ່ວມກັນ. ພາສາກຣີກອະທິບາຍຄຳວ່າ "ໃຫ້ກຳລັງໃຈ" ຖ່າຍທອດຄວາມຄິດເຖິງຄວາມສະບາຍໃຈ. ເປັນການອອຍໃຈທີ່ມີຈຸດມຸ່ງໝາຍເພື່ອຊ່ວຍໃຫ້ຄົນທີ່ບໍ່ມີຄວາມສຸກ ຫຼືຜິດຫວັງ ໃຫ້ຮູ້ສຶກດີຂຶ້ນ.

ໃນບາງສະຖານການ, ແມ່ນແຕ່ຄຣິສຕຽນທີ່ເຄັ່ງຄັດທີ່ສຸດກໍອາດທໍ້ແທ້ໄດ້. ຄວາມທຸກຄອບງຳເຮົາໄດ້, ດັ່ງນັ້ນເຮົາຈຶ່ງສູນເສັຽຄວາມຕັ້ງໃຈໄປ ອານາຄົດອັນຮຸ່ງເຮືອງຢູ່ຂ້າງໜ້າ. ໃນເວລານັ້ນ, ພວກເຮົາຕ້ອງການຄຳໜູນໃຈ ແລະ ຕັກເຕືອນເຮົາ: ທ້ອງຟ້າມືດນີ້ເປັນພຽງຊົ່ວຄາວແລະສວັນຄອຍຖ້າເຮົາຢູ່.

***ເມື່ອໃດທີ່ທ່ານເຄີຍເຫັນການໃຫ້ກຳລັງໃຈພຽງເລັກໜ້ອຍເຮັດໃຫ້ມີການປ່ຽນແປງຄັ້ງໃຫຍ່ໃນຊີວິດໃຜຜູ້ນຶ່ງ?***

## 3. <u>1ເທສະໂລນິກ 5:12-15</u>.

*12. ພີ່ນ້ອງທັງຫຼາຍ ເອີຍ, ພວກເຮົາວອນຂໍໃຫ້ເຈົ້າທັງຫຼາຍຮັບຮູ້ຄົນທີ່ເຮັດການໜັກໜ່ວງຢູ່ຖ້າມກາງພວກເຈົ້າ ຄືຜູ້ຄຸ້ມຄອງແລະເຕືອນສະຕິພວກເຈົ້າໃນພຣະນາມຂອງອົງພຣະຜູ້ເປັນເຈົ້າ 13. ຈົ່ງນັບຖືແລະຮັກເຂົາຢ່າງຫຼາຍທີ່ສຸດ ເພາະເນື່ອງດ້ວຍການງານຂອງເຂົານັ້ນ ຈົ່ງຢູ່ຮ່ວມກັນດ້ວຍຄວາມສງົບສຸກ 14. ພີ່ນ້ອງທັງຫຼາຍ ເອີຍ, ພວກເຮົາວອນຂໍພວກເຈົ້າໃຫ້ເຕືອນສະຕິຄົນທີ່ບໍ່ຢູ່ໃນລະບຽບ ຈົ່ງຊູໃຈຜູ້ທີ່ນ້ອຍໃຈ, ຈົ່ງຊ່ວຍເຫຼືອຜູ້ທີ່ອ່ອນກຳລັງ ຈົ່ງອົດທົນຕໍ່ຄົນທັງປວງ 15.ຈົ່ງລະວັງໃຫ້ດີ ຢ່າໃຫ້ຜູ້ໃດເຮັດຊົ່ວຕອບແທນການຊົ່ວ ແຕ່ວ່າຈົ່ງສແວງຫາທາງເຮັດດີຕໍ່ກັນ ແລະກັນຢູ່ສເມີ ແລະຕໍ່ຄົນທັງປວງດ້ວຍ.*

ການໃຊ້ຊີວິດຮ່ວມກັນເປັນຍິ່ງກວ່າການເຂົ້າສັງຄົມກັບຄົນທີ່ມີຄວາມຄິດເໝືອນກັນ; ມັນກ່ຽວຂ້ອງກັບການຢືນຢັດເປັນນຶ່ງດຽວກັບຜູ້ເຊື່ອອື່ນໆທີ່ຕໍ່ຕ້ານຄວາມມືດໃນໂລກຂອງເຮົາ. ມັນເປັນການໃຫ້ກຳລັງໃຈກັນແລະກັນ ໃນການດຳເນີນຊີວິດກັບພຣະຄຣິດ. ແລະໝາຍເຖິງການທ້າທາຍກັນເຮັດຄວາມດີ. ກິລາ ຊຸບເປີໂບວລ໌ 2023 ນຳສເນີການປະເຊີນໜ້າກັນຢ່າງດຸເດືອດລະຫວ່າງສອງທີມທີ່ເດັ່ນທີ່ສຸດຂອງ NFL ໃນຂນະນັ້ນໄດ້ແກ່ Philadelphia Eagles ແລະ Kansas City Chiefs. ຫຼາຍວັນກ່ອນຊຸບເປີໂບວລ໌, Delaware Online ນຳສເນີເລື້ອງລາວ ຄໍລັມນິສຕ໌ Martin Frank ໃນຫົວຂໍ້ "ວິທີທີ່ບໍ່ເໝືອນໃຜຂອງ Jalen Hurts 'ພັກດັນຣີຊີບເວີ 'Eagles' ໃຫ້ຍິ່ງໃຫຍ່-ແລະພວກເຂົາຕອບໂຕ້ຄືນຢ່າງໃດ."

ລາວສືບຕໍ່ ມັນເປັນຄວາມສໍາພັນສະເພາະລະຫວ່າງຄວາເຕີແບກ Jalen Hurts ແລະ ຣີຊີບເວີ ຂອງລາວ DeVonta Smith ແລະ A.J. Brown, ທີ່ທໍາໃຫ້ພວກເຂົາໄດ້ສະແດງໃນລະດັບທີ່ຄຸ້ມຄ່າກັບຊຸບເປີໂບລ໌. ແຝຣງ ໄດ້ບັລຍາຍຄວາມສໍາພັນລະຫວ່າງຄວາເຕີແບກ ແລະຣີຊີບເວີ ເປັນ "ຄວາມຮັກທີ່ຍາກ," ບ່ອນທີ່ເຂົາທ້າທາຍກັນໃຫ້ເປັນຄົນດີເດັ່ນສຸດ. ເຮີຕ໌ ໃຊ້ຄວາມເປັນຜູ້ນໍາແລະແກ້ໄຂຣີຊີບເວີຂອງາວ ແຕ່ຍອມຮັບການແກ້ໄຂຄືກັນ. ຜົນລັບກໍເປັນທີ່ປະຕິເສດບໍ່ໄດ້: ບຣາວແລະສມິດ "ໄດ້ກາຍເປັນອີໂກລ໌ ກຸ່ມແລກທີ່ໄດ້ຮັບດູໂອ ແຕ່ລະເບຣກ 1000 ຢາດ ໃນຣະດູດຽວກັນ." ແລະເຮີຕ໌ ໄດ້ນໍາທີມເອົາຊນະ 16-1 ຂອງລະດູ, ທໍາສະຖິຕິແຟຣນຊາຍທັງໝົດ 35 ທັສດາວ.

ການຝຶກຝົນຄວາມຮັກທີ່ຍາກແລະຊຸກຍູ້ກັນເພື່ອໃຫ້ເປັນຜູ້ຕິດຕາມພຣະຄຣິດທີ່ດີເດັ່ນເປັນລັກສນະການດໍາເນີນຊີວິດຮ່ວມກັນທີ່ທ່ານໂປໂລບັລຍາຍໄວ້ໃນຂໍ້12-15. ທີ່ນີ້ ເພິ່ນໄດ້ໃຫ້ຄໍາແນະນໍາສຸດທ້າຍແກ່ຜູ້ອ່ານຂອງເພິ່ນ. ເພິ່ນໄດ້ເນັ້ນໜັກໃສ່ວິທີການປະຕິບັດຕໍ່ກັນຢ່າງໃດ ເລີ່ມຕົ້ນດ້ວຍ ສະມາຊິກຂອງຄຣິຕະຈັກຄວນປະຕິບັດຕໍ່ຜູ້ນໍາຢ່າງໃດ.

***ມີວິທີໃດແດ່ທີ່ເຮົາສາມາດໃຫ້ກຽດຜູ້ນໍາໃນຄຣສຕະຈັກໄດ້?***

ຜູ້ນໍາທີ່ທ່ານໂປໂລກ່າວເຖິງໜ້າຈະເປັນຜູ້ດູແລ, ຜູ້ອາວຸໂສຕາມທີ່ບັລຍາຍໄວ້ໃນ 1ຕມທ 3:1-2; 5:17. ໃນເບື້ອງຕົ້ນຂອງປວັດສາດຄຣິສຕະຈັກ, ໂຄງຮ່າງການຈັດຕັ້ງໄດ້ຈັດໄວ້ສໍາລັບການນໍາຂອງຄຣິສຕະຈັກ. ເມື່ອທ່ານໂປໂລກໍ່ຕັ້ງຄຣິສຕະຈັກ, ເພິ່ນຢູ່ກັບເຂົາຊົ່ວລະຍະສັ້ນ. ເພິ່ນໄດ້ແຕ່ງຕັ້ງຜູ້ນໍາຝ່າຍຈິດວິນຍານທີ່ເຂັ້ມແຂງ ໃຫ້ສອນຫຼັກຄໍາສອນທີ່ຖືກຕ້ອງ, ສ້າງສາສິກຜູ້ເຊື່ອ, ແລະມອບໝາຍໜ້າທີ່ໃຫ້ກ່ອນເພິ່ນຈະຈາກໄປ. ເພື່ອຄຣິສຕະຈັກຈະເລີນໃນຄວາມເປັນນຶ່ງ, ຜູ້ນໍາເຫຼົ່ານີ້ຈໍາເປັນຕ້ອງໄດ້ຮັບຄວາມນັບຖື ແລະການສນັບສນູນຈາກສະມາຊິກທຸກຄົນ. ຕໍ່ໄປ ທ່ານໂປໂລໃຫ້ຄໍາແນະນໍາເລື້ອງຜູ້ເຊື່ອຄວນປະຕິບັດຕໍ່ກັນຢ່າງໃດ. ຄໍາກິຣິຍາ "ເຕືອນສະຕິ" ໃນຂໍ້ 14 ເປັນຄໍາຊຸກຍູ້ຫຼາຍກວ່າຄໍາວ່າ "ຂໍຮ້ອງ"ໃນຂໍ້ 12. ຄຣິສຕະຈັກເທສະໂລນິກຂ້ອນຂ້າງມີບັນຫາກັບສະມາຊິກບາງຄົນທີ່ "ຢູ່ລ້າ." ມັກເປັນຄົນປະເພດບໍ່ຮັບໃຊ້ປຸກປັ່ນບັນຫາທີ່ສຸດ. ຄົນອື່ນໃນໂບດ "ອ່ອນກໍາລັງ." ເຂົາຕ້ອງການຄໍາໜູນໃຈຈາກພີ່ນ້ອງຜູ້ເຊື່ອ. "ຄົນອ່ອນແອ" ອາດເປັນຜູ້ເຊື່ອທີ່ຍັງອ່ອນໃນຄວາມເຊື່ອ, ຄົນຂາດເຂີນ, ຫຼື ສູ້ຊົນກັບບາບ.

ສຸດທ້າຍ, ທ່ານໂປໂລກ່າວເພື່ອສະແດງຄວາມອົດທົນຕໍ່ທຸກຄົນ. ເຮົາສາມາດທົນຕໍ່ຄວາມຜິດພາດຂອງຜູ້ອື່ນໄດ້ເມື່ອເຮົາສໍານຶກໃນຄວາມອ່ອນແອຂອງເຮົາເອງແລະຈົ່ງຈໍາໄວ້ວ່າພຣະຄຣິດອົດທົນນໍາເຮົາສໍ່າໃດ. ການບົກພ່ອງໃນຄວາມອົດທົນສາມາດຊັກຈູງໃຫ້ເຮົາແກ້ແຄ້ນ ຜູ້ຕໍ່ຕ້ານເຮົາ. ທ່ານໂປໂລເຕືອນວ່າ, ຢ່າຕອບແທນການຊົ່ວ. ການຕອບໂຕ້ຄືການບໍ່ເຊື່ອຟັງຄໍາສັ່ງຂອງພຣະເຢຊູ (ມທ 5:38-42).

ຄໍາແນະນໍາສຸດທ້າຍຂອງທ່ານໂປໂລໃນບົດນີ້ສະຫຼຸບໝົດທຸກບົດ: *ຈົ່ງລະວັງໃຫ້ດີ ຢ່າໃຫ້ຜູ້ໃດເຮັດຊົ່ວຕອບແທນການຊົ່ວ ແຕ່ວ່າຈົ່ງສແວງຫາທາງເຮັດດີຕໍ່ກັນ ແລະກັນຢູ່ສເມີ ແລະຕໍ່ຄົນທັງປວງດ້ວຍ (ຂໍ້ 15).*

## ນໍາໃຊ້ໃນຊີວິດ

ຜູ້ເຊື່ອແບ່ງປັນແລະມີປະສົບການຊີວິດໃນພຣະຄຣິດນໍາກັນ. ຈົ່ງເລືອກນໍາໃຊ້ການນໍາໃຊ້ນຶ່ງຕໍ່ລົງໄປນີ້:

- **ຈົ່ງຫາມິດຕະພາບ.** ຈົ່ງເຊີນຜູ້ໃດຜູ້ນຶ່ງໃນໂບດທີ່ທ່ານບໍ່ຮູ້ເຂົາດີມາຮັບປະທານອາຫານແລງນໍາທ່ານເປັນປະຈໍາ. ທໍາຄວາມຮູ້ຈັກກັບຄົນນີ້ເລິກເຂົ້າຕື່ມ.
- **ຊ້ອານຊູຜູ້ນໍາຂອງທ່ານ.** ອະທິຖານເພື່ອສິດຍາພິບານຂອງທ່ານທຸກອາທິດ. ໂທຫາ ຫຼື ສົ່ງຂໍ້ຄວາມ ຣະບຸການສນັບສນູນຂອງທ່ານ ແລະ ຂອບໃຈເພິ່ນໃນອາທິດນີ້.
- **ເຊີນຊວນໃຫ້ຮັບຜິດຊອບ.** ຂໍຮ້ອງຄຣິສຕຽນທີ່ເຂັ້ມແຂງເພດດຽວກັນຄົນນຶ່ງເປັນຄູ່ຮັບຜິດຊອບຮ່ວມກັບທ່ານ. ຕັ້ງເວລາປົກຕິເພື່ອກວດເບິ່ງວ່າທ່ານເຕີບໃຫຍ່ຂຶ້ນຝ່າຍວິນຍານແລະປະຕິບັດຕາມພຣະຄຣິດແຕ່ລະວັນເປັນຢ່າງໃດ. ຈົ່ງແບ່ງປັນຈຸດອ່ອນຂອງທ່ານແລະຮັບເອົາຄໍາແນະນໍາ..

**ອຸປຖັມໂດຍ ລາວຊາວເທີນບັບຕິສສໍາພັນ www.lsbf.org ໂດຍ PSI**